# ກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນ ຂອງຜູ້ປະກອບການທຸລະກິດຂົນສົ່ງໃນ ນະຄອນຫລວງພະບາງ

**ຄຳພຸດ ພົມມະຈັນ*, ຈະຣີ ຢ່າງແສນໄຊ ແລະ ມົງຄຸນ ວັດທະນາ**

*ພາກວິຊາບໍລິຫານທຸລະກິດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລ ສຸພານຸວົງ, ສປປ ລາວ*

*ຕິດຕໍ່ພົວພັນ: ຄຳພຸດ ພົມມະຈັນ, ພາກວິຊາບໍລິຫານ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລ ສຸພານຸວົງ ເບີໂທ +856 20 5969 9949, ອີເມວ: phommachanekhomphout@gmail.com*

**ຂໍ້ມູນບົດຄວາມ:**
*ການສົ່ງບົດ: 17 ມີນາ 2023*
*ການປັບປຸງ: 21 ພຶດສະພາ 2023*
*ການຕອບຮັບ: 12 ມິຖຸນາ 2023*

## ບົດຄັດຫຍໍ້

ສຶກສາກົນລະບຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດຂົນສົ່ງໃນນະຄອນ ຫລວງພະບາງ ເຊິ່ງປະກອບມີ 3 ຈຸດສິ່ງຄື: ສຶກສາສະພາບການແຂ່ງຂັນ ແລະ ການດໍາເນີນງານທາງທຸລະກິດຂອງຜູ້ປະກອບການທຸລະກິດຂົນສົ່ງ ໃນນະຄອນຫລວງພະບາງ, ສຶກສາກົນຍຸດທະສາດການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດຂົນສົ່ງ ໃນນະຄອນຫລວງພະບາງ ແລະ ສຶກສາຄວາມສໍາພັນລະຫວ່າງປັດໄຈສະພາບການແຂ່ງຂັນ, ປັດໄຈການດໍາເນີນງານທາງທຸລະກິດ ແລະ ປັດໄຈດ້ານຄຸນລັກສະນະຂອງຜູ້ປະກອບການທີ່ສົ່ງຜົນຕໍ່ກັບ ການສ້າງຄວາມໄດ້ປຽບທາງການແຂ່ງຂັນໃນການດໍາເນີນທຸລະກິດຂົນສົ່ງ ໃນນະຄອນຫລວງພະບາງ ປະຊາກອນ ແລະ ກຸ່ມຕົວຢ່າງແມ່ນຜູ້ປະກອບການທຸລະກິດຂົນສົ່ງໃນນະຄອນຫລວງພະບາງຈໍານວນ 11 ບໍລິສັດ , ມີ 31 ສາຂາ. ການວິເຄາະຂໍ້ມູນຄ່າສະຖິຕິຕ່າງໆ ດ້ວຍໂປຣແກຣມສໍາເລັດຮູບ SPSS ເພື່ອດໍາເນີນການວິເຄາະຂໍ້ມູນທາງສະຖິຕິ ເຊັ່ນ: ຄ່າຄ ວາມຖີ່, ຄ່າສ່ວນຮ້ອຍຄ່າສະເລ່ຍ (Mean), ຄ່າຜັນປ່ຽນມາດຕະຖານ (Std. Deviation) ຄ່າສໍາປະສິດສະຫະສໍາພັນ, ຄ່າລະດັບໄລຍະສໍາຄັນທາງສະຖິຕິ ເຊິ່ງຜົນຂອງການສຶກສາ ພົບວ່າ ດ້ານຂໍ້ມູນກ່ຽວກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈພາຍນອກຂອງທຸລະກິດຂົນສົ່ງ ໃນຫຼວງພະບາງ ພົບວ່າ: ໂດຍລວມແລ້ວຜູ້ປະກອບການທຸລະກິດຂົນສົ່ງໃນນະຄອນຫຼວງພະບາງໃຫ້ຄວາມສໍາຄັນຕໍ່ກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈພາຍນອກ ໃນລະດັບການມີຜົນຫຼາຍ ເມື່ອພິຈາລະນາໃນແຕ່ລະດ້ານພົບວ່າ: ຜູ້ປະກອບການທຸລະກິດຂົນສົ່ງໃນນະຄອນຫຼວງພະບາງໃຫ້ຄວາມສໍາຄັນຕໍ່ກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈພາຍນອກ ໃຫ້ຄວາມສໍາຄັນຕໍ່ປັດໄຈດ້ານເສດຖະກິດ ເປັນອັນດັບທໍາອິດຢູ່ໃນລະດັບຫຼາຍທີ່ສຸດ, ຮອງລົງມາແມ່ນປັດໄຈທາງດ້ານການເມືອງ ແລະ ດ້ານໄພຄຸກຄາມຈາກຜະລິດຕະພັນທົດແທນຢູ່ໃນລະດັບຫຼາຍ. ດ້ານຂໍ້ມູນກ່ຽວກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈພາຍໃນຂອງທຸລະກິດຂົນສົ່ງ ໃນຫຼວງພະບາງ ພົບວ່າ: ໂດຍລວມແລ້ວຜູ້ປະກອບການທຸລະກິດຂົນສົ່ງໃນນະຄອນຫຼວງພະບາງໃຫ້ຄວາມສໍາຄັນຕໍ່ກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈພາຍໃນ ໂດຍລວມແລ້ວໃນລະດັບການມີຜົນຫຼາຍ ເມື່ອພິຈາລະນາໃນແຕ່ລະດ້ານພົບວ່າ: ຜູ້ປະກອບການທຸລະກິດຂົນສົ່ງໃນນະຄອນຫຼວງພະບາງໃຫ້ຄວາມສໍາຄັນຕໍ່ກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈພາຍໃນ ໃຫ້ຄວາມສໍາຄັນຕໍ່ປັດໄຈດ້ານການເງິນ ເປັນອັນດັບທໍາອິດຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນປັດໄຈທາງດ້ານການວິໄຈ ແລະ ພັດທະນາຢູ່ໃນລະດັບຫຼາຍ. ດ້ານຂໍ້ມູນກ່ຽວກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈຄຸນລັກສະນະຂອງຜູ້ປະກອບການຂອງທຸລະກິດຂົນສົ່ງ ໃນຫຼວງພະບາງ ພົບວ່າ: ໂດຍລວມແລ້ວຜູ້ປະກອບການທຸລະກິດຂົນສົ່ງໃນນະຄອນຫຼວງພະບາງໃຫ້ຄວາມສໍາຄັນຕໍ່ກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈຄຸນລັກສະນະຂອງຜູ້ປະກອບການ ໃນລະດັບການມີຜົນຫຼາຍ ເມື່ອພິຈາລະນາໃນແຕ່ລະດ້ານພົບວ່າ: ຜູ້ປະກອບການທຸລະກິດຂົນສົ່ງໃນນະຄອນຫຼວງພະບາງໃຫ້ຄວາມສໍາຄັນຕໍ່ກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈຄຸນລັກສະນະຂອງຜູ້ປະກອບການ ໃຫ້ຄວາມສໍາຄັນຕໍ່ປັດໄຈດ້ານຄວາມໝັ້ນໃຈໃນຕົນເອງ ເປັນອັນດັບທໍາອິດຢູ່ໃນລະດັບຫຼາຍທີ່ສຸດ,ຮອງລົງມາແມ່ນປັດໄຈທາງດ້ານຄວາມຕ້ອງການຄວາມສໍາເລັດຢູ່ໃນລະດັບຫຼາຍ.

**ຄໍາສັບສໍາຄັນ:** *ຍຸດທະສາດການແຂ່ງຂັນ, ທຸລະກິດຂົນສົ່ງ, ເມືອງຫຼວງພະບາງ*

# Strategies to Competitiveness of Logistics Business in Luangprabang City

**Khamphout Phommachanh, Chahue YANGSANSAY and Mongkhoun VATTHANA**

*Department of Economics, Faculty of Economics and Tourism Souphanouvong University, Lao PDR*

***Correspondence:*** *Khamphout Phommachanh, Department of Business Management, Faculty of Economic and Tourism, Souphanouvong University, Tel: +856 20 59699949; E-mail: phommachanekhomphout@gmail.com*

***Article Info:***
*Submitted: Mar 17, 2023*
*Revised: May 21, 2023*
*Accepted: Jun 12, 2023*

## Abstract

International study of strategies to create competitive advantages of transport business operators in Luang Prabang capital which includes 3 objectives: study the competitive conditions and business operations of transport business operators in Luang Prabang capital, strategies to create competitive advantages of transport business operators in Luang Prabang capital and study the factors that affect the strategies of transport business operators in Luang Prabang capital. Analysis of various statistical data with the SPSS program by bringing the data collected from the actual questionnaire to a code as specified for the closed-ended questions, and then save it in the program to analyze the statistical data such as frequency values, percentage values, average values (Mean), standard deviation values (Std. Deviation), correlation coefficient values, statistical significance values, the results of the study are as follows:

In terms of information on the external factors of the competition of the transport business in Luang Prabang, it was found that: overall, the transport business operators in the capital Prabang give importance to the external factors of competition. Overall, at a very effective level, when considering each aspect, it is found that: the transport business operators in the Prabang capital give importance to the factors of the external competition. They give importance to the economic factors as the first at the highest level, followed by the political factors and the threat from substitute products at the most levels, and the next level is the competitive factors of the same type of business at the highest level.

In terms of information on the internal competitive factors of the transport business in Luang Prabang, it was found that: Overall, the transport business operators in the Prabang capital give importance to the internal competitive factors, as a whole, to a very effective level. When considering each aspect, it is found that: the transport business operators in the Prabang capital give importance to the internal competitive factors, giving importance to the financial factors first in many levels, followed by the research and development factors in many levels, and the administrative factors in many levels.

In terms of information on the factors of competition in terms of characteristics of transport business operators in Luang Prabang, it was found that: Overall, transport business operators in Prabang capital give importance to the factors of competition in terms of the characteristics of operators, as a whole, at a very effective level. When considering each aspect, it is found that: transport business operators in the capital of Prabang give importance to the factors of competition in terms of the characteristics of operators. They give importance to the self-esteem factor in the first place at the highest level.

**Keywords:** *Competitive Strategy, Logistics Business, Luang Prabang City*

## 1. ພາກສະເໜີ

ໃນປັດຈຸບັນ, ພັກລັດໄດ້ເປີດໂອກາດໃຫ້ຜູ້ປະກອບການທີ່ມີຄວາມຊຳນານຈາກພາຍນອກເຂົ້າຮ່ວມການດຳເນີນງານການຂົນສົ່ງເພີ່ມເຕີມ ຜູ້ປະກອບທຸລະກິດການຂົນສົ່ງຕ້ອງເຂົ້າໃຈບົດບາດຂອງການຂົນສົ່ງທີ່ຈະຕອບສະໜອງຄວາມຕ້ອງການຂອງລູກຄ້າ, ສຳລັບບັນຫາຂອງຜູ້ປະກອບການການຂົນສົ່ງໃນໄລຍະຜ່ານມາແມ່ນ ຜູ້ປະກອບການຂົນສົ່ງທາງຖະໜົນ ບໍ່ໄດ້ໃຫ້ຄວາມສຳຄັນທາງດ້ານຄຸນນະພາບ ແລະ ການພັດທະນາຄວາມສາມາດບຸກຄະລາກອນຍັງຂາດວິໄສທັດໃນການເບິ່ງສະພາບພາຍໃນ ແລະ ພາຍນອກຂອງບໍລິສັດ ເຮັດໃຫ້ຂາດບຸກຄະລາກອນຂາດການຮຽນຮູ້ເພື່ອພັດທະນາຄວາມຮູ້ຄວາມສາມາດຂອງຕົນເອງ ໃນການໃຫ້ບໍລິການລູກຄ້າທີ່ມີປະສິດທິພາບ ບຸກຄະລາກອນແມ່ນສ່ວນໜຶ່ງຂອງ ຕົວຊີ້ວັດພາຍໃນທີ່ສຳຄັນຂອງບໍລິສັດ ເຊິ່ງຜູ້ປະກອບການຍັງຂາດຄວາມຮູ້ ແລະ ຄວາມເຂົ້າໃຈການພັດທະນາຊັບພະຍາກອນມະນຸດເຮັດໃຫ້ອົງກອນຂາດຄວາມຄິດສ້າງສັນ, ຄວາມບໍ່ມີປະສິດທິພາບໃນການຄຸ້ມຄອງ, ເຖິງວ່າຈະມີຄວາມຈິງທີ່ວ່າພະນັກງານຂອງລາວມີຄວາມຊຳນານ ແລະ ຄວາມຊຳນານໃນພູມສາດ ສະພາບເສັ້ນທາງ ແລະ ເສັ້ນທາງການຂົນສົ່ງ. ໃນປັດຈຸບັນ, ເຕັກໂນໂລຊີຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບການຂົນສົ່ງໄດ້ຮັບການພັດທະນາເພື່ອໃຫ້ມີປະສິດທິພາບຫຼາຍຂຶ້ນ ບໍ່ວ່າຈະເປັນການເຊື່ອມຕໍ່ຂໍ້ມູນລະຫວ່າງອົງການຈັດຕັ້ງ, ເຕັກໂນໂລຊີການຄຸ້ມຄອງພາຍໃນອົງການຈັດຕັ້ງໃນການເຮັດວຽກຂອງການຄຸ້ມຄອງການດຳເນີນງານ ແລະ ການປະເມີນຜົນການບໍລິການ ແລະ ອື່ນໆ. ສະນັ້ນ, ຜູ້ປະກອບການການຂົນສົ່ງຕ້ອງການຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບເຕັກໂນໂລຢີທີ່ສາມາດຈັດສົ່ງສິນຄ້າໄດ້ໄວເທົ່າທີ່ຈະໄວໄດ້ ແລະ ຄ່າຂົນສົ່ງທີ່ດີທີ່ສຸດເພື່ອເພີ່ມການແຂ່ງຂັນທາງທຸລະກິດ ແລະ ເພີ່ມກຳໄລ ກຳໄລໃຫ້ແກ່ອົງກອນ.

ຈາກບັນຫາຂ້າງເທິງ ຜູ້ປະກອບການຂົນສົ່ງທາງບົກຄວນພັດທະນາທ່າແຮງຂອງຕົນໃຫ້ມີປະສິດທິພາບ, ໂດຍສະເພາະໃນຂະແໜງການຂົນສົ່ງທາງຖະໜົນທີ່ຄວນພິຈາລະນາ, ຜູ້ປະກອບການຂົນສົ່ງຄວນເອົາໃຈໃສ່ຄຸ້ມຄອງການຂົນສົ່ງເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍຫຼືເວລາໃນການຂົນສົ່ງ ເຊິ່ງເປັນຫົວໃຈຂອງການດຳເນີນທຸລະກິດພັດທະນາບຸກຄະລາກອນໃຫ້ມີທັກສະ ແລະ ຊຳນິຊຳນານໃນທຸລະກິດການຂົນສົ່ງທາງບົກ, ການນຳໃຊ້ເຕັກໂນໂລຊີທັນສະໄໝ, ນຳໃຊ້ເພື່ອປ່ຽນແປງຮູບແບບການບໍລິການການຂົນສົ່ງເພື່ອໃຫ້ຜູ້ໃຫ້ບໍລິການຂົນສົ່ງສາມາດແຂ່ງຂັນໃນຕະຫຼາດການຂົນສົ່ງໄດ້ໃນອະນາຄົດ. ຄວນສຸມໃສ່ການສ້າງເຄືອຂ່າຍຄູ່ຮ່ວມມືໃນການດຳເນີນທຸລະກິດໃຫ້ສາມາດຄວບຄຸມພື້ນທີ່ການໃຫ້ບໍລິການ. ດັ່ງນັ້ນ, ການຄຸ້ມຄອງທີ່ມີປະສິດທິພາບທີ່ມີເປົ້າໝາຍແມ່ນເພື່ອໃຫ້ທັນເວລາເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍ, ແນໃສ່ຄວາມພໍໃຈຂອງລູກຄ້າແລະມີລະບົບການຄຸ້ມຄອງການຂົນສົ່ງທີ່ປະສານງານທີ່ຜົນໄດ້ຮັບ, ບັນລຸເປົ້າຫມາຍຢ່າງມີປະສິດທິຜົນແລະການຮັກສາການແຂ່ງຂັນທຸລະກິດທີ່ເຂັ້ມແຂງ. ທັງນີ້ກໍເພື່ອພັດທະນາຄວາມໄດ້ປຽບດ້ານການແຂ່ງຂັນຂອງທຸລະກິດຂົນສົ່ງພ້ອມທັງເປັນຍຸດທະສາດສຳຄັນຂອງຜູ້ປະກອບການຂົນສົ່ງ (ຫ້ອງການໂຍທາ ແລະ ຂົນສົ່ງ ນະຄອນຫຼວງພະບາງ, 2022)

ໃນປັດຈຸບັນທຸລະກິດຂົນສົ່ງຢູ່ ແຂວງຫຼວງພະບາງໄດ້ມີການເຕີບໂຕຢ່າງວ່ອງໄວ, ມີຫລາຍບໍລິສັດ ໄດ້ຂະ ຫຍາຍສາຂາຂອງຕົນເອງເພື່ອເຮັດໃຫ້ການບໍລິການຄວບຄຸມທຸກພື້ນທີ່.ເຮັດໃຫ້ທຸລະກິດການຂົນສົ່ງກາຍເປັນຕະ ຫຼາດແຂ່ງຂັນຢ່າງເສລີ ບາງບໍລິສັດມີສັກາຍະພາບສູງໃນການເລືອກທຳເລທີ່ຕັ້ງ, ເອົາໃຈໃສ່ເລື້ອງຄຸນນະພາບຂອງການໃຫ້ບໍລິການ, ນຳໃຊ້ເທັກໂນໂລຊີທີ່ທັນສະໄໝ. ແຕ່ຍັງມີຫລາຍບໍລິສັດທີ່ເກີດຂຶ້ນມາໃຫມ່ ໂດຍບໍ່ມີການສຳຫຼວດຄວາມຕ້ອງການຂອງລູກຄ້າ, ຂາດການບໍລິການທີ່ດີ, ພະນັກງານຍັງຂາດປະສົບການ, ການນຳໃຊ້ເທັກໂນໂລຊີຍັງບໍ່ທັນສະໄຫມ, ການບໍລິການຊັກຊ້າ, ຜູ້ບໍລິຫານຂາດການວາງແຜນໄລຍະຍາວ ເຮັດໃຫ້ເກີດມີການແຂ່ງຂັນກັນເລື້ອງຕົ້ນທຶນຕ່ຳ. ເຮັດໃຫ້ຜູ້ປະກອບການບາງຕົວແທນບໍ່ມີຄວາມຢູ່ລອດໃນການເຂົ້າມາຂອງຜູ້ປະກອບການໃຫມ່ ຫລື ກົດດັນຈາກການແຂ່ງຂັນໃນທຸລະກິດດຽວກັນ.

## 2. ອຸປະກອນ ແລະ ວິທີການ

### 2.1 ເຄື່ອງມືໃນການຄົ້ນຄວ້າ

ເຄື່ອງມືທີ່ໃຊ້ເຂົ້າໃນການເກັບຂໍ້ມູນໃນຄັ້ງນີ້ແມ່ນນຳໃຊ້ແບບສອບຖາມໂດຍແຍກເປັນແຕ່ລະພາກສ່ວນຄື:

ພາກສ່ວນທີ 1: ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ, ໃນການສ້າງຂອບເຂດເນື້ອໃນຂອງເຄື່ອງມືໃນສ່ວນນີ້ແມ່ນໄດ້ອີງຕາມແນວຄິດລັກສະນະຂອງປະຊາກອນ ເຊິ່ງລັກສະນະຂອງຄຳຖາມແມ່ນເປັນຄຳຖາມປາຍປິດ ແລະ ເປັນແບບເລືອກຕອບຕາມລາຍການ (Checking List).

ພາກສ່ວນທີ 2: ຂໍ້ມູນກ່ຽວກັບສະພາບການແຂ່ງຂັນທາງທຸລະກິດຂອງຜູ້ປະກອບການທຸລະກິດຂົນສົ່ງໃນນະຄອນຫລວງພະບາງ, ໂດຍລັກສະນະຂອງຄຳຖາມແມ່ນເປັນຄຳຖາມປາຍປິດ ແລະ ເປັນແບບເລືອກຕອບຕາມລາຍການ (Checking List).

ພາກສ່ວນທີ 3: ຂໍ້ມູນກ່ຽວກັບການດຳເນີນທຸລະກິດຂອງຜູ້ປະກອບການທຸລະກິດຂົນສົ່ງໃນນະຄອນຫລວງພະບາງ, ໂດຍລັກສະນະຂອງຄຳຖາມຈະເປັນແບບມາດຕາສ່ວນ (Scale Rating) 5 ລະດັບ ແລະ ມີ 5 ຂໍ້ໃຫ້ເລືອກຄື: ຫລາຍທີ່ສຸດ, ຫລາຍ, ປານກາງ, ຫນ້ອຍ ແລະ ຫນ້ອຍທີ່ສຸດ.

ພາກສ່ວນທີ 4: ຄຸນລັກສະນະຂອງຜູ້ປະກອບການທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດຂົນສົ່ງໃນນະຄອນຫລວງພະບາງ, ໂດຍລັກສະນະຂອງຄຳຖາມຈະເປັນແບບມາດຕາສ່ວນ (Scale Rating) 5 ລະດັບ ແລະ ມີ 5 ຂໍ້ໃຫ້ເລືອກຄື: ຫລາຍທີ່ສຸດ, ຫລາຍ, ປານກາງ, ຫນ້ອຍ ແລະ ຫນ້ອຍສຸດ.

## 2.2 ຂໍ້ມູນທີ່ໃຊ້ເຂົ້າໃນການຄົ້ນຄວ້າ

ຂໍ້ມູນທີ່ໃນການວິໄຈຄັ້ງນີ້ຄະນະຜູ້ວິໄຈໄດ້ນຳມາຈາກ 2 ແຫຼ່ງຕົ້ນຕໍດັ່ງນີ້: ຂໍ້ມູນປະຖົມພູມ (ຂໍ້ມູນຂັ້ນໜຶ່ງ) ແລະ ຂໍ້ມູນທຸຕິຍະພູມ (ຂໍ້ມູນຂັ້ນສອງ)

### 2.2.1 ຂໍ້ມູນປະຖົມພູມ

ຫມາຍເຖິງຂໍ້ມູນທີ່ໄດ້ຈາກການຕອບແບບສອບຖາມໃນການລົງເກັບກຳຂໍ້ມູນຕົວຈິງຈາກຜູ້ປະກອບການທຸລະກິດຂົນສົ່ງໃນນະຄອນຫລວງພະບາງ ທີ່ໃຫ້ຄວາມຮ່ວມມືໃນການຕອບແບບສອບຖາມ

### 2.2.2 ຂໍ້ມູນທຸຕິຍະພູມ

ແມ່ນການເກັບລວບລວມຂໍ້ມູນທີ່ມີຢູ່ແລ້ວເຂົ້າມາປະກອບໃນການຂຽນບົດຄັ້ງນີ້ເຊັ່ນ: ຈາກບົດວິໄຈທີ່ກ່ຽວຂ້ອງຈາກລຸ່ນທີ່ຜ່ານມາ (ຫໍສະຫມຸດມະຫາວິທະຍາໄລສຸພານຸວົງ), ຕຳລາ, ຄົ້ນຄ້ວາຈາກແຫລ່ງອິນເຕີເນັດ, ສະຖິຕິຈຳນວນຫົວຫນ່ວຍທຸລະກິດຂົນສົ່ງຈາກພະແນກໂຍທາຄົມມະນາຄົມຂົນສົ່ງ ແລະ ໄດ້ຈາກທິດສະດີທີ່ກ່ຽວຂ້ອງເຊັ່ນ: ທິດສະດີກົນລະຍຸດການສ້າງຄວາມແຕກຕ່າງ, ທິດສະດີການດຳເນີນງານທາງທຸລະກິດ ແລະທິດສະດີຄວາມໄດ້ປຽບທາງການແຂ່ງຂັນ ລວມທັງນິຕິກຳທີ່ກ່ຽວຂ້ອງ.

## 2.3 ແບບຈຳລອງທີ່ໃຊ້ເຂົ້າໃນການສຶກສາ

ສະຖິຕິການວິເຄາະການທົດຖອຍພະຫຸຄູນ ໂດຍໃຊ້ການວິເຄາະຄວາມທົດຖອຍພະ ຫຸຄູນ (Multiple Regression Analysis) (ທານິນ ສິນລະຈາຣຸ, 2010) ໂດຍໃຊ້ສູດລຸ່ມນີ້:

ສົມຜົນໃນຮູບຂອງປະຊາກອນ $Yi = \beta_O + \beta_1 X_2 + \beta_2 X_2 + \cdots + \beta_K X_K + \mathcal{E}$

ສົມຜົນໃນຮູບຂອງກຸ່ມຕົວຢ່າງ $Yi = \beta_O + \beta_1 X_2 + \beta_2 X_2 + \cdots + \beta_K X_K + e$

ສົມຜົນການພະຍາກອນ $\hat{Y} = \beta_O + \beta_1 X_2 + \beta_2 X_2 + \cdots + \beta_K X_K$

ໂດຍ: $Y_i$ ແທນ ຕົວແປຕາມທີ່ i.

$X_i$ ແທນ ຕົວແປອິດສະຫລະທີ່ i.

$\beta_O$ ແທນ ຄ່າຄົງທີ່ (Constant) ຂອງການທົດຖອຍຈະໃຊ້ສັນຍາລັກສຳລັບສົມຜົນຕົວຢ່າງ.

e ແທນຄວາມຄາດເຄື່ອນທີ່ເກີດຈາກຕົວຢ່າງລະຫວ່າງຄ່າແທ້ຈິງ Y ແລະ ຄ່າທີ່ໄດ້ຈາກສົມຜົນ $\hat{Y}$(Y hat).

$\beta_1$ແທນ ຄ່າສຳປະສິດທົດຖອຍ (Regression Coefficient) ຂອງຕົວແປອິດສະຫລະທີ່ i(x) ແລະ ໃຊ້ສັນຍາລັກ $\beta_1$ສຳລັບຄ່າສຳປະສິດທົດຖອຍຄົງທີ່ໃນຮູບຂອງສົມຜົນຕົວຢ່າງ.

## 2.4 ວິທີການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນ ແມ່ນຜູ້ສຶກສາຈະເກັບກຳລວບລວມຂໍ້ມູນຈາກແບບສອບຖາມທັງໝົດ, ກວດສອບຄວາມຖືກຕ້ອງຂອງແບບສອບຖາມແຕ່ລະຊຸດ. ຈາກນັ້ນ, ເອົາຂໍ້ມູນທັງໝົດໄປວິເຄາະໂດຍນຳໃຊ້ Program SPSS ໃນແຕ່ລະສ່ວນຂອງແບບສອບຖາມ ດັ່ງນີ້:

1) ການວິເຄາະຂໍ້ມູນສະຖານະພາບສ່ວນບຸກຄົນຂອງຜູ້ຕອບແບບສອບຖາມຈາກແບບສອບຖາມສ່ວນທີ 1 ແມ່ນວິເຄາະຫາຄ່າຄວາມຖີ່ ແລະ ຄ່າສ່ວນຮ້ອຍ.

2) ການວິເຄາະຂໍ້ມູນຂໍ້ມູນສະພາບການດຳເນີນທຸລະກິດຂອງຜູ້ຕອບແບບສອບຖາມ ຈາກແບບສອບຖາມສ່ວນທີ 2 ແມ່ນວິເຄາະຫາຄ່າຄວາມຖີ່ ແລະ ຄ່າສ່ວນຮ້ອຍ.

3) ການວິເຄາະຂໍ້ມູນ ລະດັບຄວາມຄິດເຫັນຂອງຜູ້ຕອບແບບສອບຖາມທີ່ຕໍ່ດ້ານຄຸນລັກສະນະ ຂອງຜູ້ປະກອບການ, ດ້ານກົນລະຍຸດທາງທຸລະກິດ ແລະດ້ານຜົນສຳເລັດໃນການດຳເນີນ ທຸລະກິດ ຈາກແບບສອບຖາມສ່ວນທີ 3, 4 ແລະ 5 ແມ່ນວິເຄາະຫາຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຕະຖານ (Standard Deviation).

4) ການຄິດໄລ່ຫາຄ່າລະດັບອິດທິພົນຂອງຄຸນລັກສະນະຜູ້ປະກອບການຕໍ່ຄວາມຄິດເຫັນດ້ານກົນລະຍຸດທາງທຸລະກິດ ແລະຜົນສຳເລັດໃນການດຳເນີນທຸລະກິດ ແມ່ນວິເຄາະສົມຜົນການວິເຄາະແບບທົດຖອຍ (Multiple Regression Analysis Model), ຄ່າສຳປະສິດສະຫະສຳພັນພະຫຸ (Multiple Correlation) ແລະ ເຮັດການພະຍາກອນຕົວປ່ຽນໃນອະນາຄົດໂດຍໃຊ້ສູດ.

# 3. ຜົນການສຶກສາ

ຄວາມຄິດເຫັນຂອງຜູ້ປະກອບການຕໍ່ສະພາບສະພາບແວດລ້ອມຂອງທຸລະກິດຂົນສົ່ງ ໃນເທດສະບານນະຄອນ

ຫລວງພະບາງ ພົບວ່າ ຜູ້ປະກອບການທຸລະກິດຂົນສົ່ງໃນນະຫຼວງພະບາງສ່ວນຫຼາຍແມ່ນເພດຍິງຫລາຍກວ່າເພດຊາຍ, ໂດຍສ່ວນຫລາຍມີອາຍຸສະເລ່ຍ ໃນລະຫວ່າງ 31-40 ປີ ມີຈຳນວນ 13 ຄົນກວມເອົາ 41.9%, ຮອງລົງມາແມ່ນອາຍຸ 20-30 ປີ ມີຈຳນວນ 12 ຄົນກວມເອົາ 38.7%,, ຕາມລຳດັບ, ລະດັບການສຶກສາສ່ວນໃຫຍ່ແມ່ນມີລະດັບການສຶກສາ ປະລິນຍາຕີ ມີຈຳນວນ 17 ຄົນ ກວມເອົາ 54.8%, ຮອງລົງມາແມ່ນຊັ້ນສູງ ຫຼື ຕໍ່າກວ່າ ມີຈຳນວນ 11 ຄົນກວມເອົາ 35.5%, ຕາມລຳດັບ, ຮູບແບບຂອງທຸລະກິດສ່ວນໃຫຍ່ແມ່ນທຸລະກິດສ່ວນຕົວ ມີຈຳນວນ 18 ຄົນກວມເອົາ 58.1%, ຮອງລົງມາແມ່ນຄອບຄົວ ມີຈຳນວນ 9 ຄົນກວມເອົາ 29.0%, ຕາມລຳດັບ, ຜູ້ປະກອບການສ່ວນໃຫຍ່ແມ່ນມີໄລຍະການດຳເນີນທຸລະກິດ 3-6 ປີ ມີຈຳນວນ 20 ຄົນກວມເອົາ 64.5%, ຮອງລົງມາແມ່ນຕໍ່າກວ່າ 3 ປີ ມີຈຳນວນ 8 ຄົນກວມເອົາ 25.8%.

ສະພາບການແຂ່ງຂັນພາຍນອກໂດຍລວມແລ້ວ ມີຄວາມສຳຄັນໃນລະດັບຫຼາຍ, ເຊິ່ງມີຄ່າສະເລ່ຍເທົ່າກັບ 4.15 ແລະ ຄ່າຜັນປ່ຽນມາດຕະຖານ 0.83. ເມື່ອພິຈາລະນາລາຍລະອຽດແລ້ວເຫັນວ່າ ຜູ້ປະກອບການສ່ວນຫຼາຍແມ່ນເຫັນວ່າ ປັດໄຈດ້ານເສດຖະກິດ ມີລະດັບຄວາມສຳຄັນຫຼາຍທີ່ສຸດ ມີຄ່າສະເລ່ຍ 4.37 ແລະ ຄ່າຜັນປ່ຽນມາດຕະຖານ 0.67, ປັດໄຈດ້ານການເມືອງ ມີລະດັບຄວາມສຳຄັນຫຼາຍທີ່ສຸດ ມີຄ່າສະເລ່ຍ 4.23 ແລະ ມີຄ່າຜັນປ່ຽນມາດຕະຖານ 0.98 ແລະ ໄພຄຸກຄາມຈາກຜະລິດຕະພັນທົດແທນ ລະດັບຄວາມສຳຄັນຫຼາຍທີ່ສຸດ ມີຄ່າສະເລ່ຍ 4.23 ແລະ ມີຄ່າຜັນປ່ຽນມາດຕະຖານ 0.92, ຮອງລົງມາແມ່ນການແຂ່ງຂັນຂອງທຸລະກິດປະເພດດຽວກັນ ຢູ່ໃນລະດັບຫຼາຍທີ່ສຸດ ມີຄ່າສະເລ່ຍ 4.21 ແລະ ຄ່າຜັນປ່ຽນມາດຕະຖານ 0.09, ປັດໄຈດ້ານວັດທະນາທຳ ແລະ ສັງຄົມ ແລະ ປັດໄຈດ້ານເຕັກໂນໂລຊີ ຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 4.14 ແລະ ຄ່າຜັນປ່ຽນມາດຕະຖານ 0.95, ອຳນາດຕໍ່ລອງຂອງຜູ້ຊື້ ຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 4.05 ແລະ ຄ່າຜັນປ່ຽນມາດຕະຖານ 0.74, ການເຂົ້າສູ່ທຸລະກິດຂອງຄູ່ແຂ່ງລາຍໃໝ່ ໃນລະດັບຫຼາຍ ມີຄ່າສະເລ່ຍ 4.04 ແລະ ຄ່າຜັນປ່ຽນມາດຕະຖານ 0.93, ແລະ ອຳນາດຕໍ່ລອງຜູ້ຂາຍປັດໄຈການຜະລິດ ໃນລະດັບຫຼາຍ ມີຄ່າສະເລ່ຍ 3.99 ແລະ ຄ່າຜັນປ່ຽນມາດຕະຖານ 0.65.

ຄວາມຄິດເຫັນຂອງຜູ້ປະກອບການຕໍ່ປັດໄຈສະພາບແວດລ້ອມພາຍໃນທຸລະກິດຂົນສົ່ງ ໃນນະຄອນຫລວງພະບາງ ພົບວ່າ ດ້ານປັດໄຈພາຍໃນ ໂດຍລວມແລ້ວຢູ່ໃນລະດັບຫຼາຍ, ເຊິ່ງມີຄ່າສະເລ່ຍເທົ່າກັບ 4.08 ແລະ ຄ່າຜັນປ່ຽນມາດຕະຖານ 0.94. ເມື່ອພິຈາລະນາລາຍລະອຽດແລ້ວເຫັນວ່າ ຜູ້ປະກອບການສ່ວນຫຼາຍແມ່ນເຫັນວ່າ ດ້ານການເງິນ ມີລະດັບຄວາມສຳຄັນຫຼາຍ ມີຄ່າສະເລ່ຍ 4.20 ແລະ ຄ່າຜັນປ່ຽນມາດຕະຖານ 0.95, ດ້ານການວິໄຈ ແລະ ພັດທະນາ ມີລະດັບຄວາມສຳຄັນຫຼາຍ ມີຄ່າສະເລ່ຍ 4.18 ແລະ ຄ່າຜັນປ່ຽນມາດຕະຖານ 0.97, ດ້ານການບໍລິຫານ ມີລະດັບຄວາມສຳຄັນຫຼາຍ ມີຄ່າສະເລ່ຍ 4.08 ແລະ ມີຄ່າຜັນປ່ຽນມາດຕະຖານ 0.86, ດ້ານການຜະລິດ ແລະ ການບໍລິການ ຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 4.00 ແລະ ຄ່າຜັນປ່ຽນມາດຕະຖານ 0.99, ແລະ ດ້ານການຕະຫຼາດ ມີລະດັບຄວາມສຳຄັນຫຼາຍ ມີຄ່າສະເລ່ຍ 3.95 ແລະ ຄ່າຜັນປ່ຽນມາດຕະຖານ 0.97.

ຄວາມຄິດເຫັນຂອງຜູ້ປະກອບການຕໍ່ປັດໄຈດ້ານຄຸນລັກສະນະຂອງຜູ້ປະກອບການ ພົບວ່າ ລະດັບຄວາມຄິດເຫັນຂອງຜູ້ປະກອບການເຫັນວ່າ ປັດໄຈດ້ານຄຸນລັກສະນະຂອງຜູ້ປະກອບການ ມີຄວາມສຳຄັນໃນລະດັບຫຼາຍ, ເຊິ່ງມີຄ່າສະເລ່ຍເທົ່າກັບ 4.09 ແລະ ຄ່າຜັນປ່ຽນມາດຕະຖານ 0.89 ເມື່ອພິຈາລະນາລາຍລະອຽດແລ້ວເຫັນວ່າ ຄວາມໝັ້ນໃຈໃນຕົນເອງ ມີລະດັບຄວາມສຳຄັນຫຼາຍທີ່ສຸດ ມີຄ່າສະເລ່ຍ 4.21 ແລະ ຄ່າຜັນປ່ຽນມາດຕະຖານ 0.90, ຄວາມຕ້ອງການຄວາມສຳເລັດ ມີລະດັບຄວາມສຳຄັນຫຼາຍ ມີຄ່າສະເລ່ຍ 4.17 ແລະ ມີຄ່າຜັນປ່ຽນມາດຕະຖານ 1.00, ຄວາມຮູ້ຄວາມສາມາດ ຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 4.11 ແລະ ຄ່າຜັນປ່ຽນມາດຕະຖານ 0.83, ຄວາມຄິດເຊີງນະວັດຕະກຳ ມີລະດັບຄວາມສຳຄັນຫຼາຍ ມີຄ່າສະເລ່ຍ 4.07 ແລະ ຄ່າຜັນປ່ຽນມາດຕະຖານ 0.86, ຄວາມອົດທົນ ມີລະດັບຄວາມສຳຄັນຫຼາຍ ມີຄ່າສະເລ່ຍ 4.01 ແລະ ຄ່າຜັນປ່ຽນມາດຕະຖານ 0.87 ແລະ ການຍອມຮັບຄວາມສ່ຽງ ຫຼື ຄວາມກ້າສ່ຽງ ມີລະດັບຄວາມສຳຄັນຫຼາຍ ມີຄ່າສະເລ່ຍ 4.00 ແລະ ຄ່າຜັນປ່ຽນມາດຕະຖານ 0.92.

ຄວາມຄິດເຫັນຂອງຜູ້ປະກອບການຕໍ່ກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນທາງທຸລະກິດຂົນສົ່ງໃນນະຄອນຫຼວງພະບາງ ພົບວ່າ ກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນ ເຫັນວ່າ ມີຄວາມສຳຄັນໃນລະດັບຫຼາຍ, ເຊິ່ງມີຄ່າສະເລ່ຍເທົ່າກັບ 4.1 ແລະ ຄ່າຜັນປ່ຽນມາດຕະຖານ 0.82 ເມື່ອພິຈາລະນາລາຍລະອຽດແລ້ວເຫັນວ່າ ກົນລະຍຸດການມຸ່ງເນັ້ນສະເພາະ ມີລະດັບຄວາມສຳຄັນຫຼາຍທີ່ສຸດ ມີຄ່າສະເລ່ຍ 4.25 ແລະ ຄ່າຜັນປ່ຽນມາດຕະຖານ 0.90, ກົນລະຍຸດການສ້າງຄວາມແຕກຕ່າງ ມີລະດັບຄວາມສຳຄັນຫຼາຍ ມີຄ່າສະເລ່ຍ 4.03 ແລະ ມີຄ່າຜັນປ່ຽນມາດຕະຖານ 0.78, ແລະ ກົນລະຍຸດການເປັນຜູ້ນຳ

ດ້ານຕົ້ນທຶນ ຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ 4.02 ແລະ ຄ່າຜັນປ່ຽນມາດຕະຖານ 0.79

ປັດໄຈສະພາບແວດລ້ອມພາຍນອກ, ປັດໄຈສະພາບແວດລ້ອມພາຍໃນ ແລະ ປັດໄຈດ້ານຄຸນລັກສະນະຂອງຜູ້ປະກອບການທີ່ສົ່ງຜົນຕໍ່ກັບກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນໃນການດຳເນີນທຸລະກິດຂົນສົ່ງໃນນະຄອນຫລວງພະບາງ ພົບວ່າ ປັດໄຈສະພາບການແຂ່ງຂັນສົ່ງຜົນຕໍ່ກັບກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນໃນການດຳເນີນທຸລະກິດຂົນສົ່ງໃນນະຄອນຫລວງພະບາງ ເຫັນວ່າ ປັດໄຈສະພາບແວດທາງການແຂ່ງຂັນທັງໝົດ 9 ຕົວປ່ຽນ ແມ່ນມີຄວາມສຳພັນກັບຄວາມສາມາດໃນການປະຕິບັດງານຂອງພະນັກງານ (Y) ຢູ່ໃນລະດັບຫຼາຍທີ່ສຸດ (R = 0.920) ແລະ ປັດໄຈສະພາບແວດລ້ອມທາງການແຂ່ງຂັນ 1 ຕົວປ່ຽນ ແມ່ນສາມາດອະທິບາຍ ຫຼື ພະຍາກອນກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດ ໄດ້ເຖິງ 84.7% ຫຼື ມີຜົນພຽງແຕ່ 84.7% (R Square = 0.847) ສ່ວນທີ່ເຫຼືອອີກ 15.3% ແມ່ນເປັນຜົນຈາກຕົວປ່ຽນອື່ນໆ ທີ່ບໍ່ໄດ້ນຳມາວິເຄາະໃນການຄົ້ນຄວ້າຄັ້ງນີ້ ດ້ວຍລະດັບຄວາມຄາດເຄື່ອນຂອງການປະເມີນ Std. Error = 31.9% ເຊິ່ງໝາຍເຖິງຄວາມຜິດພາດທີ່ເກີດຈາກການພະຍາກອນໂດຍສະເລ່ຍ ແລະ ພົບວ່າມີພຽງ 1 ປັດໄຈທີ່ມີຄວາມສຳພັນກັນໃນລະດັບຄວາມສຳຄັນທາງສະຖິຕິ ຄື: ປັດໄຈດ້ານເສດຖະກິດ ($X_2$) ມີຄ່າ $\beta$ =0.335 ໃນການຄົ້ນຄວ້າຄັ້ງນີ້ມີສົມຜົນພະຍາກອນກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງຄື:

ສົມຜົນການພະຍາກອນກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງໃນຮູບຂອງການນຳໃຊ້ຄ່າຄະແນນດິບມີດັ່ງນີ້:

$Y = 0.156 + 0.335 X_2$

ສົມຜົນສົມຜົນພະຍາກອນກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງໃນຮູບຂອງການນຳໃຊ້ຄ່າຄະແນນມາດຕະຖານມີຄື:

$Z_{Y1} = 0.335 X_2$

ຈາກຜົນການວິເຄາະສົມຜົນການທົດຖອຍແບບພະຫຸຄູນ ດ້ວຍເຕັກນິກ Enter ສາມາດອະທິບາຍການພະຍາກອນສົມຜົນຂອງກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງ ໂດຍການຈັດລຳດັບປັດໄຈທີ່ມີຄວາມສຳພັນແຕ່ໃຫຍ່ຫານ້ອຍ ໄດ້ດັ່ງນີ້:

1) ຖ້າຫາກປັດໄຈດ້ານເສດຖະກິດ ($X_2$) ປ່ຽນແປງຂຶ້ນ 1 ລະດັບ ກໍ່ຈະມີຜົນຕໍ່ກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງ 0.335 ລະດັບເຊັ່ນກັນ, ແຕ່ໃນກົງກັນຂ້າມຖ້າຫາກປັດໄຈດ້ານດ້ານເສດຖະກິດ ($X_2$) ປ່ຽນແປງລົງ 1 ລະດັບ ກໍ່ຈະສົ່ງຜົນຕໍ່ລະດັບກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງ ໃນນະຄອນຫຼວງພະບາງປ່ຽນແປງລົງ 0.335 ລະດັບເຊັ່ນກັນ ໃນຂະນະທີ່ປັດໄຈດ້ານອື່ນບໍ່ປ່ຽນແປງ.

ປັດໄຈການດຳເນີນງານມີອິດທິພົນຕໍ່ກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງ

ຜົນການວິເຄາະເຫັນວ່າ: ປັດໄຈການດຳເນີນງານທັງໝົດ 5 ຕົວປ່ຽນ ແມ່ນມີຄວາມສຳພັນກັບກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດ (Y) ຢູ່ໃນລະດັບປານກາງ (R = 0.911) ແລະ ປັດໄຈການດຳເນີນງານ 1 ຕົວປ່ຽນ ແມ່ນສາມາດອະທິບາຍ ຫຼື ພະຍາກອນກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດ ໄດ້ເຖິງ 82.9% ຫຼື ມີຜົນພຽງແຕ່ 82.9% (R Square = 0.829) ສ່ວນທີ່ເຫຼືອອີກ 17.1% ແມ່ນເປັນຜົນຈາກຕົວປ່ຽນອື່ນໆ ທີ່ບໍ່ໄດ້ນຳມາວິເຄາະໃນການຄົ້ນຄວ້າຄັ້ງນີ້ ດ້ວຍລະດັບຄວາມຄາດເຄື່ອນຂອງການປະເມີນ Std. Error =29.9% ເຊິ່ງໝາຍເຖິງຄວາມຜິດພາດທີ່ເກີດຈາກການພະຍາກອນໂດຍສະເລ່ຍ ແລະ ພົບວ່າມີພຽງ 1 ປັດໄຈທີ່ມີຄວາມສຳພັນກັນໃນລະດັບຄວາມສຳຄັນທາງສະຖິຕິ ຄື: ປັດໄຈດ້ານບໍລິຫານ ($X_{10}$) ມີຄ່າ $\beta = 0.328$ ໃນການຄົ້ນຄວ້າຄັ້ງນີ້ມີສົມຜົນພະຍາກອນກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງຄື:

ສົມຜົນການພະຍາກອນກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງໃນຮູບຂອງການນຳໃຊ້ຄ່າຄະແນນດິບມີດັ່ງນີ້:

$Y = 0682 + 0.328 X_{10}$

ສົມຜົນສົມຜົນພະຍາກອນກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງໃນຮູບຂອງການນຳໃຊ້ຄ່າຄະແນນມາດຕະຖານມີຄື:

$Z_{Y1} = 0.328 X_{10}$

ຈາກຜົນການວິເຄາະສົມຜົນການທົດຖອຍແບບພະຫຸຄູນ ດ້ວຍເຕັກນິກ Enter ສາມາດອະທິບາຍການພະຍາກອນ ສົມຜົນຂອງກົນລະຍຸດການສ້າງຄວາມໄດ້ປຽບທາງກັນ ແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະ ບາງ ໂດຍການຈັດລໍາດັບປັດໄຈທີ່ມີຄວາມສໍາພັນແຕ່ໃຫຍ່ ຫານ້ອຍ ໄດ້ດັ່ງນີ້:

1) ຖ້າຫາກປັດໄຈດ້ານການບໍລິຫານ (X10) ປ່ຽນແປງຂຶ້ນ 1 ລະດັບ ກໍ່ຈະມີຜົນຕໍ່ກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງ 0,328 ລະດັບເຊັ່ນກັນ, ແຕ່ໃນກົງກັນຂ້າມຖ້າຫາກປັດໄຈດ້ານການບໍລິຫານ (X10) ປ່ຽນແປງລົງ 1 ລະດັບ ກໍ່ຈະສົ່ງຜົນຕໍ່ລະດັບກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງປ່ຽນແປງລົງ 0,328 ລະດັບເຊັ່ນກັນ ໃນຂະນະທີ່ປັດໄຈດ້ານອື່ນບໍ່ປ່ຽນແປງ.

ປັດໄຈຄຸນລັກສະນະຜູ້ປະກອບການມີອິດທິພົນຕໍ່ກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງ

ຜົນການວິເຄາະເຫັນວ່າ: ປັດໄຈການດໍາເນີນງານທັງໝົດ 6 ຕົວປ່ຽນ ແມ່ນມີຄວາມສໍາພັນກັບກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດ (Y) ຢູ່ໃນລະດັບປານກາງ (R = 0.923) ແລະ ປັດໄຈການດໍາເນີນງານ 1 ຕົວປ່ຽນ ແມ່ນສາມາດອະທິບາຍ ຫຼື ພະຍາກອນກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດ ໄດ້ເຖິງ 92.3% ຫຼື ມີຜົນພຽງແຕ່ 92.3% (R Square = 0.923) ສ່ວນທີ່ເຫຼືອອີກ 7.7% ແມ່ນເປັນຜົນຈາກຕົວປ່ຽນອື່ນໆ ທີ່ບໍ່ໄດ້ນໍາມາວິເຄາະໃນການຄົ້ນຄວ້າຄັ້ງນີ້ ດ້ວຍລະດັບຄວາມຄາດເຄື່ອນຂອງການປະເມີນ Std. Error = 28.49% ເຊິ່ງໝາຍເຖິງຄວາມຜິດພາດທີ່ເກີດຈາກການພະຍາກອນໂດຍສະເລ່ຍ ແລະ ພົບວ່າມີພຽງ 2 ປັດໄຈທີ່ມີຄວາມສໍາພັນກັນໃນລະດັບຄວາມສໍາຄັນທາງສະຖິຕິ ຄື: ປັດໄຈດ້ານຄວາມຮູ້ຄວາມສາມາດ ($X_{18}$) ມີຄ່າ $\beta = 0.302$ ແລະ ປັດໄຈດ້ານຄວາມອົດທົນ ($X_{19}$) ມີຄ່າ $\beta = 0.350$ ໃນການຄົ້ນຄວ້າຄັ້ງນີ້ມີສົມຜົນພະຍາກອນກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງຄື:

ສົມຜົນການພະຍາກອນກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງໃນຮູບຂອງການນໍາໃຊ້ຄ່າຄະແນນດິບມີດັ່ງນີ້:

$$Y = 0.516 + 0.274 X_{18} + 0.299 X_{19}$$

ສົມຜົນສົມຜົນພະຍາກອນກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງໃນຮູບຂອງການນໍາໃຊ້ຄ່າຄະແນນມາດຕະຖານມີຄື:

$$Z_{Y1} = 0{,}274 X_{18} + 0{,}299 X_{19}$$

ຈາກຜົນການວິເຄາະສົມຜົນການທົດຖອຍແບບພະຫຸຄູນ ດ້ວຍເຕັກນິກ Enter ສາມາດອະທິບາຍການພະຍາກອນ ສົມຜົນຂອງກົນລະຍຸດການສ້າງຄວາມໄດ້ປຽບທາງກັນ ແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະ ບາງ ໂດຍການຈັດລໍາດັບປັດໄຈທີ່ມີຄວາມສໍາພັນແຕ່ໃຫຍ່ ຫານ້ອຍ ໄດ້ດັ່ງນີ້:

1) ປັດໄຈດ້ານຄວາມຮູ້ຄວາມສາມາດ ($X_{18}$) ປ່ຽນແປງຂຶ້ນ 1 ລະດັບ ກໍ່ຈະມີຜົນຕໍ່ກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງ 0,274 ລະດັບເຊັ່ນກັນ, ແຕ່ໃນກົງກັນຂ້າມຖ້າຫາກປັດໄຈດ້ານຄວາມຮູ້ຄວາມສາມາດ ($X_{18}$) ປ່ຽນແປງລົງ 1 ລະດັບ ກໍ່ຈະສົ່ງຜົນຕໍ່ລະດັບກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງປ່ຽນແປງລົງ 0,274 ລະດັບເຊັ່ນກັນ ໃນຂະນະທີ່ປັດໄຈດ້ານອື່ນບໍ່ປ່ຽນແປງ.

2) ປັດໄຈດ້ານຄວາມອົດທົນ ($X_{19}$) ປ່ຽນແປງຂຶ້ນ 1 ລະດັບ ກໍ່ຈະມີຜົນຕໍ່ກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງ 0,299 ລະດັບເຊັ່ນກັນ, ແຕ່ໃນກົງກັນຂ້າມຖ້າຫາກປັດໄຈດ້ານຄວາມອົດທົນ ($X_{19}$) ປ່ຽນແປງລົງ 1 ລະດັບ ກໍ່ຈະສົ່ງຜົນຕໍ່ລະດັບກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງປ່ຽນແປງລົງ 0,299 ລະດັບເຊັ່ນກັນ ໃນຂະນະທີ່ປັດໄຈດ້ານອື່ນບໍ່ປ່ຽນແປງ.

## 4. ວິພາກຜົນ

### 4.1 ສະພາບການແຂ່ງຂັນ ແລະ ການດໍາເນີນງານທາງທຸລະກິດຂອງຜູ້ປະກອບການທຸລະກິດຂົນສົ່ງໃນນະຄອນຫລວງພະບາງ

ຈາກການສຶກສາພົບວ່າປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈພາຍນອກຂອງທຸລະກິດຂົນສົ່ງ ໃນຫຼວງພະບາງ ພົບວ່າ: ໂດຍລວມແລ້ວຜູ້ປະກອບການທຸລະກິດຂົນສົ່ງໃນນະຄອນຫຼວງພະບາງໃຫ້ຄວາມສໍາຄັນຕໍ່ກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈພາຍນອກ ໂດຍລວມແລ້ວໃນລະດັບການມີຜົນຫຼາຍ ເມື່ອພິຈາລະນາໃນແຕ່ລະດ້ານພົບວ່າ: ຜູ້ປະກອບການທຸລະກິດຂົນສົ່ງໃນ

ນະຄອນຫຼວງພະບາງໃຫ້ຄວາມສໍາຄັນຕໍ່ກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈພາຍນອກ ໃຫ້ຄວາມສໍາຄັນຕໍ່ປັດໄຈດ້ານເສດຖະກິດ ເປັນອັນດັບທໍາອິດຢູ່ໃນລະດັບຫຼາຍທີ່ສຸດ, ຮອງລົງມາແມ່ນປັດໄຈທາງດ້ານການເມືອງ ແລະ ດ້ານໄພຄຸກຄາມຈາກຜະລິດຕະພັນທົດແທນຢູ່ໃນລະດັບຫຼາຍທີ່ສຸດ, ຖັດລົງມາແມ່ນປັດໄຈດ້ານການແຂ່ງຂັນຂອງທຸລະກິດປະເພດດຽວກັນ ຢູ່ໃນລະດັບຫຼາຍທີ່ສຸດ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ Lathsamy Singvilay (2021) ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບການແຂ່ງຂັນຂອງຜູ້ປະກອບກິດຈະການທຸລະກິດບໍລິການໃນເຂດເທດສະບານເມືອງໄຊ ແຂວງອຸດົມໄຊ; ເຊິ່ງມີຜົນການຄົ້ນຄ້ວາ ລະດັບປັດໄຈສະພາບແວດລ້ອມພາຍນອກຂອງທຸລະກິດທີ່ສົ່ງຜົນໃນການສ້າງຄວາມໄດ້ປຽບການແຂ່ງຂັນຂອງຜູ້ປະກອບການທຸລະກິດບໍລິການໃນຂະແໜງທຸລະກິດທີ່ພັກແຮມ ແລະ ຮ້ານອາຫານ ຢູ່ເຂດເທດສະບານເມືອງໄຊ ແຂວງອຸດົມໄຊ ໃຫ້ຄວາມສໍາຄັນຢູ່ໃນລະດັບຫຼາຍ ໃນການວິເຄາະສະພາບແວດລ້ອມພາຍນອກຂອງທຸລະກິດ ທີ່ສົ່ງຜົນໃນການສ້າງຄວາມໄດ້ປຽບການແຂ່ງຂັນທຸລະກິດບໍລິການ ຄື: 1) ດ້ານວັດທະນະທໍາສັງຄົມ ແມ່ນວິເຄາະມາຈາກຄ່ານິຍົມການໃຊ້ບໍລິການ ທີ່ພັກແຮມ ແລະ ຮ້ານອາຫານ ໃນສັງຄົມປະຈຸບັນ ມີຄ່ານິຍົມຢູ່ໃນລະດັບສູງ, ອັດຕາການເພີ່ມຂຶ້ນຂອງປະຊາກອນ ແລະ ຄວາມຕ້ອງການຂອງລູກຄ້າມາໃຊ້ຜະລິດຕະພັນບໍລິການ ຢູ່ໃນລະດັບສູງ, 2) ດ້ານເຕັກໂນໂລຊີ ແມ່ນວິເຄາະມາຈາກສັງຄົມໃນປັດຈຸບັນມີລະບົບເຕັກໂນໂລຊີການສື່ສານທີ່ທັນສະໄໝ ແລະ ວ່ອງໄວ ລວມທັງການກະຈາຍຂໍ້ມູນຂ່າວສານໄປເຖິງກຸ່ມລູກຄ້າເປົ້າໝາຍ ແລະ ທົ່ວປະເທດໄດ້ວ່ອງໄວ ຢູ່ໃນລະດັບສູງ, 3) ດ້ານການເມືອງ ແລະ ກົດໝາຍ ແມ່ນວິເຄາະມາຈາກລັດຖະບານມີການສົ່ງເສີມການລົງທຶນທຸລະກິດບໍລິການຊັດເຈນ ແລະ ມີໜ່ວຍງານດູແລ-ຄວບຄຸມທຸລະກິດບໍລິການ ຢູ່ໃນລະດັບສູງ, 4) ດ້ານເສດຖະກິດ ແມ່ນວິເຄາະຈາກລວມຍອດຜະລິດຕະພັນພາຍໃນ ແຂວງອຸດົມໄຊ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ການຂະຫຍາຍຕົວຂອງສະຖາບັນການເງິນ ແລະ ແຫຼ່ງເງິນທຶນຕອບສະໜອງກັບຂະແໜງບໍລິການ ຢູ່ໃນລະດັບສູງ.

ຈາກການສຶກສາພົບວ່າ ປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈພາຍໃນຂອງທຸລະກິດຂົນສົ່ງ ໃນຫຼວງພະບາງ ພົບວ່າ: ໂດຍລວມແລ້ວຜູ້ປະກອບການທຸລະກິດຂົນສົ່ງໃນນະຄອນຫຼວງພະບາງໃຫ້ຄວາມສໍາຄັນຕໍ່ກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈພາຍໃນ ໂດຍລວມແລ້ວໃນລະດັບການມີຜົນຫຼາຍ. ເມື່ອພິຈາລະນາໃນແຕ່ລະດ້ານພົບວ່າ ຜູ້ປະກອບການທຸລະກິດຂົນສົ່ງໃນນະຄອນຫຼວງພະບາງໃຫ້ຄວາມສໍາຄັນຕໍ່ກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈພາຍໃນ ໃຫ້ຄວາມສໍາຄັນຕໍ່ປັດໄຈດ້ານການເງິນ ເປັນອັນດັບທໍາອິດຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນປັດໄຈທາງດ້ານການວິໄຈ ແລະ ພັດທະນາຢູ່ໃນລະດັບຫຼາຍ, ຖັດລົງມາແມ່ນປັດໄຈດ້ານການບໍລິຫານ ຢູ່ໃນລະດັບຫຼາຍ. ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ Lathsamy Singvilay (2021) ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບການແຂ່ງຂັນຂອງຜູ້ປະກອບກິດຈະການທຸລະກິດບໍລິການໃນເຂດເທດສະບານເມືອງໄຊ ແຂວງອຸດົມໄຊ; ເຊິ່ງມີຜົນການຄົ້ນຄ້ວາ ລະດັບປັດໄຈສະພາຍໃນຂອງທຸລະກິດທີ່ສົ່ງຜົນໃນການສ້າງຄວາມໄດ້ປຽບການແຂ່ງຂັນຂອງຜູ້ປະກອບການທຸລະກິດບໍລິການໃນຂະແໜງທຸລະກິດທີ່ພັກແຮມ ແລະ ຮ້ານອາຫານ ຢູ່ເຂດເທດສະບານເມືອງໄຊ ແຂວງອຸດົມໄຊ ໃຫ້ຄວາມສາມາດຢູ່ໃນລະດັບຫຼາຍ ຄື: 1) ຜູ້ປະກອບການມີຄວາມເປັນຕົວຂອງຕົວເອງ ໃນຄວາມສາມາດເຮັດວຽກງານ ແລະ ຄວາມຕັ້ງໃຈໃນການຫາວິທີທາງໃນການສ້າງໂອກາດໃຫ້ແກ່ຕົນເອງ ຢູ່ໃນລະດັບສູງ, 2) ຜູປະກອບການມີນະວັດຕະກໍາ ໃນການບໍລິຫານຈັດການສາມາດບໍລິການໄດ້ຢ່າງມີປະສິດທິພາບ, ມີຄວາມພ້ອມໃນການລົງທຶນດ້ານເຄື່ອງມື ແລະ ອຸປະກອນເພື່ອສ້າງຜະລິດຕະພັນການບໍລິການ ຢູ່ໃນລະດັບສູງ, 3) ຜູ້ປະກອບການມີຄວາມສາມາດຄວບຄຸມແກ້ໄຂບັນຫາທີ່ເກີດຂຶ້ນໃນປະຈຸບັນ ແລະ ການປຽນແປງໃນອານາຄົດ ຢູ່ໃນລະດັບສູງ, 4) ຜູ້ປະກອບການມີຄວາມເຂັ້ມແຂງໃນການແຂ່ງຂັນ ໃນທຸລະກິດ ແລະ ຊ່ອງທາງການຈັດຈໍາໜ່າຍໄດ້ປຽບຈາກຄູ່ແຂ່ງ ຢູ່ໃນລະດັບສູງ, 5) ຜູ້ປະກອບການມີຄວາມສາມາດກ້າສ່ຽງໃຊ້ສັບສິນຈໍານວນຫຼາຍຂອງຕົນເຂົ້າໃນການກໍ່ສ້າງກິດຈະການ ແລະ ກ້າສ່ຽງໃນທຸລະກິດທີ່ຕົນບໍ່ຮັບຮູ້ດີ ຫຼື ບໍ່ມີປະສົບການ ຢູ່ໃນລະດັບສູງ.

### 4.2 ປັດໄຈດ້ານຄຸນລັກສະນະຂອງຜູ້ປະກອບການທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດຂົນສົ່ງ ໃນນະຄອນຫລວງພະບາງ

ຈາກການສຶກສາພົບວ່າປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈຄຸນລັກສະນະຂອງຜູ້ປະກອບການຂອງທຸລະກິດຂົນສົ່ງ ໃນຫຼວງພະບາງ ພົບວ່າ: ໂດຍລວມແລ້ວຜູ້ປະກອບການທຸລະກິດຂົນສົ່ງໃນນະຄອນຫຼວງພະບາງໃຫ້ຄວາມສໍາຄັນຕໍ່ກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈຄຸນລັກສະນະຂອງຜູ້ປະກອບການ ໂດຍລວມແລ້ວໃນລະດັບການມີຜົນຫຼາຍ. ເມື່ອພິຈາລະນາໃນແຕ່ລະດ້ານພົບ

ວ່າ: ຜູ້ປະກອບການທຸລະກິດຂົນສົ່ງໃນນະຄອນຫຼວງພະບາງໃຫ້ຄວາມສຳຄັນຕໍ່ກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈຄຸນລັກສະນະຂອງຜູ້ປະກອບການ ໃຫ້ຄວາມສຳຄັນຕໍ່ປັດໄຈດ້ານຄວາມໝັ້ນໃຈໃນຕົນເອງ ເປັນອັນດັບທຳອິດຢູ່ໃນລະດັບຫຼາຍທີ່ສຸດ, ຮອງລົງມາແມ່ນປັດໄຈທາງດ້ານຄວາມຕ້ອງການຄວາມສຳເລັດຢູ່ໃນລະດັບຫຼາຍ, ຖັດລົງມາແແມ່ນປັດໄຈດ້ານຄວາມຮູ້ຄວາມສາມາດຢູ່ໃນລະດັບຫຼາຍ, ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ Thatsaphone Pilasouk (2021) ທີ່ໄດ້ສຶກສາກ່ຽວປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຖລະກິດ ການບໍລິການ ໃນເຂດກຸງເທບມະຫານະຄອນ.

**4.3 ຄວາມຄິດເຫັນຂອງຜູ້ປະກອບການຕໍ່ກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນທາງທຸລະກິດ**

ຈາກການສຶກສາພົບວ່າຄວາມຄິດເຫັນຂອງຜູ້ປະກອບການຕໍ່ກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນທາງທຸລະກິດ ດ້ານກົນລະຍຸດການເປັນຜູ້ນຳດ້ານຕົ້ນທຶນ ມີຄວາມສຳຄັນໃນລະດັບຫຼາຍ ເມື່ອພິຈາລະນາລາຍລະອຽດແລ້ວເຫັນວ່າ ສາມາດຮັກສາລະດັບຕົ້ນທຶນໃຫ້ເທົ່າເດີມ ຫຼື ຫຼຸດລົງໄດ້ ມີລະດັບຄວາມສຳຄັນຫຼາຍທີ່ສຸດ, ດ້ານກົນລະຍຸດການສ້າງຄວາມແຕກຕ່າງ ມີຄວາມສຳຄັນໃນລະດັບຫຼາຍ ເມື່ອພິຈາລະນາລາຍລະອຽດແລ້ວເຫັນວ່າ ສ້າງການບໍລິການທີ່ມີຄຸນນະພາບກົງກັບຄວາມຕ້ອງການຂອງລູກຄ້າ ມີລະດັບຄວາມສຳຄັນຫຼາຍທີ່ສຸດ ແລະ ກົນລະຍຸດການມຸ່ງເນັ້ນສະເພາະ ມີຄວາມສຳຄັນໃນລະດັບຫຼາຍທີ່ສຸດ ເມື່ອພິຈາລະນາລາຍລະອຽດແລ້ວເຫັນວ່າ ມີການນຳໃຊ້ເຕັກໂນໂລຊີເຂົ້າມາໃຊ້ໃນທຸລະກິດໃຫ້ມີການບໍລິການທີ່ວ່ອງໄວຕາມຄວາມຕ້ອງການຂອງລູກຄ້າ ມີລະດັບຄວາມສຳຄັນຫຼາຍທີ່ສຸດ.

**4.4. ປັດໄຈສະພາບການແຂ່ງຂັນ, ການດຳເນີນງານທາງທຸລະກິດ ແລະປັດໄຈດ້ານຄຸນລັກສະນະຂອງຜູ້ປະກອບການທີ່ສົ່ງຜົນຕໍ່ກັບການສ້າງຄວາມໄດ້ປຽບທາງການແຂ່ງຂັນໃນການດຳເນີນທຸລະກິດຂົນສົ່ງໃນນະຄອນຫຼວງພະບາງ**

**4.4.1 ປັດໄຈສະພາບການແຂ່ງຂັນສົ່ງຜົນຕໍ່ກັບກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນໃນການດຳເນີນທຸລະກິດຂົນສົ່ງໃນນະຄອນຫລວງພະບາງ**

ຈາກຜົນການທົດສອບທາງສະຖິຕິ ເຫັນວ່າປັດໄຈດ້ານສະພາບການແຂ່ງຂັນພາຍນອກ ກັບກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນ ຂອງທຸລະກິດບໍລິການຂົນສົ່ງໃນນະຄອນ ຫລວງພະບາງ ທັງຫມົດ 9 ຕົວປ່ຽນມີຄວາມສຳພັນກັນຢູ່ໃນລະດັບຕ່ຳກວ່າ 0.09 ແລະ ມີ 9ຕົວປ່ຽນມີຄວາມສຳພັນກັບກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນ. ສະນັ້ນ, ຕົວປ່ຽນອິດສະຫລະທັງ 9 ຕົວປ່ຽນ ແມ່ນສາມາດນຳໄປພະຍາກອນ ກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນ ຫລວງພະບາງໄດ້. ຜົນການວິເຄາະເຫັນວ່າ: ປັດໄຈສະພາບແວດທາງການແຂ່ງຂັນທັງໝົດ 9 ຕົວປ່ຽນ ແມ່ນມີຄວາມສຳພັນກັບຄວາມສາມາດໃນການປະຕິບັດງານຂອງພະນັກງານ ຢູ່ໃນລະດັບຫລາຍທີ່ສຸດ ແລະ ປັດໄຈສະພາບແວດລ້ອມທາງການແຂ່ງຂັນ 1 ຕົວປ່ຽນ ແມ່ນສາມາດອະທິບາຍ ຫຼື ພະຍາກອນກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດ ຖ້າຫາກປັດໄຈດ້ານເສດຖະກິດ ປ່ຽນແປງຂຶ້ນ 1 ລະດັບ ກໍ່ຈະມີຜົນຕໍ່ກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງ ໃນນະຄອນຫຼວງພະບາງ ປ່ຽນແປງຂຶ້ນ 0.335 ລະດັບເຊັ່ນກັນ. ກົງກັນຂ້າມ, ຖ້າຫາກປັດໄຈດ້ານດ້ານເສດຖະກິດ ປ່ຽນແປງລົງ 1 ລະດັບ ກໍ່ຈະສົ່ງຜົນຕໍ່ລະດັບກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງ ປ່ຽນແປງລົງ 0.335 ລະດັບເຊັ່ນກັນ ໃນຂະນະທີ່ປັດໄຈດ້ານອື່ນບໍ່ປ່ຽນແປງ.

**4.4.2 ປັດໄຈການດຳເນີນງານມີອິດທິພົນຕໍ່ກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນຫລວງພະບາງ**

ຈາກຜົນການທົດສອບທາງສະຖິຕິ ເຫັນວ່າປັດໄຈກະຕຸ້ນໃນການເຮັດວຽກທັງຫມົດ 5 ຕົວມີຄວາມສຳພັນກັນຢູ່ໃນລະດັບຕ່ຳກວ່າ 0.9 ແລະ ທັງໝົດ 5 ຕົວມີຄວາມສຳພັນກັບກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດ. ສະນັ້ນ, ຕົວປ່ຽນອິດສະຫຼະ ແມ່ນສາມາດນຳໄປພະຍາກອນກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງໃນນະຄອນ ຫລວງພະບາງໄດ້. ຜົນການວິເຄາະຄວາມຖົດຖອຍພະຫຸຄູນພົບວ່າອິດທິພົນຂອງປັດໄຈການດຳເນີນງານທີ່ມີຜົນຕໍ່ກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງ ໃນນະຄອນຫຼວງພະບາງ ເຫັນວ່າ ປັດໄຈການດຳເນີນງານມີຄວາມສຳພັນທາງເສັ້ນຊື່ກັບກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນ ແລະ ສາມາດນຳໄປໃຊ້ອະທິບາຍການປ່ຽນແປງຂອງປັດໄຈການດຳເນີນງານປັດໄຈການດຳເນີນງານທັງໝົດ 5 ຕົວປ່ຽນ ແມ່ນມີຄວາມສຳພັນກັບກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດ ຢູ່ໃນລະດັບປານກາງ ແລະ ປັດໄຈການ

ດຳເນີນງານ 1 ຕົວປ່ຽນ ແມ່ນສາມາດອະທິບາຍ ຫຼື ພະຍາກອນກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດ; ຖ້າຫາກປັດໄຈດ້ານການບໍລິຫານ ປ່ຽນແປງຂຶ້ນ 1 ລະດັບ ກໍ່ຈະມີຜົນຕໍ່ກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງ ໃນນະຄອນຫລວງພະບາງ ເຊັ່ນກັນ, ແຕ່ໃນກົງກັນຂ້າມຖ້າຫາກປັດໄຈດ້ານການບໍລິຫານ ປ່ຽນແປງລົງ 1 ລະດັບ ກໍ່ຈະສົ່ງຜົນຕໍ່ລະດັບກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງ ໃນນະຄອນຫລວງພະບາງປ່ຽນແປງລົງ ເຊັ່ນກັນ ໃນຂະນະທີ່ປັດໄຈດ້ານອື່ນບໍ່ປ່ຽນແປງ. ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ Thatsaphone Pilasouk (2021) ທີ່ໄດ້ສຶກສາກ່ຽວປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດ ການບໍລິການ ໃນເຂດກຸງເທບມະຫານະຄອນ.

### 4.3.3 ປັດໄຈຄຸນລັກສະນະຜູ້ປະກອບການມີອິດທິພົນຕໍ່ກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງ ໃນນະຄອນຫລວງພະບາງ

ຈາກຜົນການທົດສອບທາງສະຖິຕິ ເຫັນວ່າ ປັດໄຈກະຕຸ້ນໃນການເຮັດວຽກທັງຫມົດ 6 ຕົວມີຄວາມສຳພັນກັນຢູ່ໃນລະດັບຕໍ່າ ແລະ ທັງຫມົດ 5 ຕົວມີຄວາມສຳພັນກັບກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດ. ສະນັ້ນ, ຕົວປ່ຽນອິດສະຫຼະ ແມ່ນສາມາດນຳໄປພະຍາກອນກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງທຸລະກິດບໍລິການຂົນສົ່ງ ໃນນະຄອນຫຼວງພະບາງ ໄດ້. ຜົນການວິເຄາະເຫັນວ່າ ປັດໄຈການດຳເນີນງານທັງໝົດ 6 ຕົວປ່ຽນ ແມ່ນມີຄວາມສຳພັນກັບກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດ (Y) ຢູ່ໃນລະດັບປານກາງ ແລະ ປັດໄຈການດຳເນີນງານ 1 ຕົວປ່ຽນ ແມ່ນສາມາດອະທິບາຍ ຫຼື ພະຍາກອນກົນລະຍຸດການສ້າງຄວາມໄດ້ປຽບທາງກັນແຂ່ງຂັນຂອງທຸລະກິດ ແລະ ຈາກຜົນການທົດສອບທາງສະຖິຕິ ຄ່າສຳປະສິດການຖົດຖອຍຂອງຕົວແປອິດສະຫຼະທີ່ສາມາດພະຍາກອນຕົວແປຕາມໄດ້ຄືປັດໄຈດ້ານການບໍລິຫານຈັດການ, ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ Thatsaphone Pilasouk (2021) ທີ່ໄດ້ສຶກສາກ່ຽວປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດ ການບໍລິການ ໃນເຂດກຸງເທບມະຫານະຄອນ.

## 5. ສະຫຼຸບ

ດ້ານຂໍ້ມູນກ່ຽວກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈພາຍນອກຂອງທຸລະກິດຂົນສົ່ງ ໃນນະຄອນຫຼວງພະບາງ ພົບວ່າ ຜູ້ປະກອບການທຸລະກິດຂົນສົ່ງ ໃນນະຄອນຫຼວງພະບາງ ໃຫ້ຄວາມສຳຄັນຕໍ່ກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈພາຍນອກ ໃຫ້ຄວາມສຳຄັນຕໍ່ປັດໄຈດ້ານເສດຖະກິດ ເປັນອັນດັບທຳອິດຢູ່ໃນລະດັບຫຼາຍທີ່ສຸດ, ຮອງລົງມາແມ່ນປັດໄຈທາງດ້ານການເມືອງ ແລະ ດ້ານໄພຄຸກຄາມຈາກຜະລິດຕະພັນທົດແທນ, ຖັດລົງມາແແມ່ນປັດໄຈດ້ານການແຂ່ງຂັນຂອງທຸລະກິດປະເພດດຽວກັນ. ດ້ານຂໍ້ມູນກ່ຽວກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈພາຍໃນຂອງທຸລະກິດຂົນສົ່ງ ໃນຫຼວງພະບາງ ພົບວ່າ ຜູ້ປະກອບການທຸລະກິດຂົນສົ່ງ ໃນນະຄອນຫຼວງພະບາງ ໃຫ້ຄວາມສຳຄັນຕໍ່ກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈພາຍໃນ ໃຫ້ຄວາມສຳຄັນຕໍ່ປັດໄຈດ້ານການເງິນເປັນອັນດັບທຳອິດຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນປັດໄຈທາງດ້ານການວິໄຈ ແລະ ພັດທະນາ, ຖັດລົງມາແແມ່ນປັດໄຈດ້ານການບໍລິຫານ. ດ້ານປັດໄຈຄຸນລັກສະນະຂອງຜູ້ປະກອບການຂອງທຸລະກິດຂົນສົ່ງ ໃນນະຄອນຫຼວງພະບາງ ພົບວ່າ ໂດຍລວມແລ້ວຜູ້ປະກອບການທຸລະກິດຂົນສົ່ງ ໃນນະຄອນຫຼວງພະບາງ ໃຫ້ຄວາມສຳຄັນຕໍ່ກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈຄຸນລັກສະນະຂອງຜູ້ປະກອບການ ໂດຍລວມແລ້ວໃນລະດັບການມີຜົນຫຼາຍ ເມືອພິຈາລະນາໃນແຕ່ລະດ້ານ ພົບວ່າ ຜູ້ປະກອບການທຸລະກິດຂົນສົ່ງໃນ ນະຄອນຫຼວງພະບາງ ໃຫ້ຄວາມສຳຄັນຕໍ່ກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈຄຸນລັກສະນະຂອງຜູ້ປະກອບການ ໃຫ້ຄວາມສຳຄັນຕໍ່ປັດໄຈດ້ານຄວາມໝັ້ນໃຈໃນຕົນເອງ ເປັນອັນດັບທຳອິດຢູ່ໃນລະດັບຫຼາຍທີ່ສຸດ, ຮອງລົງມາແມ່ນປັດໄຈທາງດ້ານຄວາມຕ້ອງການຄວາມສຳເລັດ, ຖັດລົງມາແແມ່ນປັດໄຈດ້ານຄວາມຮູ້ຄວາມສາມາດ.

ກົນລະຍຸດການສ້າງຄວາມໄດ້ປຽບທາງການແຂ່ງຂັນທາງທຸລະກິດ ມີຄວາມສຳຄັນໃນລະດັບຫຼາຍ ໄດ້ແກ່ດ້ານກົນລະຍຸດການເປັນຜູ້ນຳດ້ານຕົ້ນທຶນ, ດ້ານກົນລະຍຸດການສ້າງຄວາມແຕກຕ່າງ ແລະ ກົນລະຍຸດການມຸ່ງເນັ້ນສະເພາະ.

ດ້ານຂໍ້ມູນກ່ຽວກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈຄຸນລັກສະນະຂອງຜູ້ປະກອບການຂອງທຸລະກິດຂົນສົ່ງ ໃນຫຼວງພະບາງ ພົບວ່າ: ໂດຍລວມແລ້ວຜູ້ປະກອບການທຸລະກິດຂົນສົ່ງໃນນະຄອນຫຼວງພະບາງໃຫ້ຄວາມສຳຄັນຕໍ່ກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈຄຸນລັກສະນະຂອງຜູ້ປະກອບການ ໃນລະດັບການມີຜົນຫຼາຍເມື່ອພິຈາລະນາໃນແຕ່ລະດ້ານພົບວ່າ: ຜູ້ປະກອບການທຸລະ

ກິດຂົນສົ່ງໃນນະຄອນຫຼວງພະບາງໃຫ້ຄວາມສຳຄັນຕໍ່ກັບປັດໄຈສະພາບການແຂ່ງຂັນທາງດ້ານປັດໄຈຄຸນລັກສະນະຂອງຜູ້ປະກອບການ ໃຫ້ຄວາມສຳຄັນຕໍ່ປັດໄຈດ້ານຄວາມໝັ້ນໃຈໃນຕົນເອງ ເປັນອັນດັບທຳອິດຢູ່ໃນລະດັບຫຼາຍທີ່ສຸດ,ຮອງລົງມາແມ່ນປັດໄຈທາງດ້ານຄວາມຕ້ອງການຄວາມສຳເລັດຢູ່ໃນລະດັບຫຼາຍ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


David. (2011). Bargaining Power of Suppliers

David. (2011). and Wheelen & Hunger, (2012), the analysis of the strengths and weaknesses of the organization is done by comparing the performance of each department with the major competitors in the industry.

Drohan. (1998). the initial stage of competitor analysis is divided into 5 stages.

Dutta, Narasimhan, & Rajiv. (2005). Intensive of Rivalry among Existing Competitors

Fraser et al. (2000). the characteristics of successful entrepreneurs include seven important characteristics

Huli. (2020). Studied the level of ability to create a competitive advantage of the business of guest house services in Luang Prabang Municipality

Hitt and team. (2013). meaning: Strategy refers to a set of tasks, relationships and actions that are processed and coordinated together.

Ireland, Hoskisson, & Hitt. (2009). Threat of New Entrants

Jaffe, Nebenzahl, & Schorr. (2005). Threat of New Entrants

Knott. (2003). Intensive of Rivalry among Existing Competitors.

McCleland. (1993). a questionnaire related to entrepreneurs to process to summarize the characteristics of successful entrepreneurs

Papha Pensiri and Konna. (2017). studied the patterns and strategies to create a competitive advantage of the clothing business in the Bo Bo market in Bangkok, Thailand.

Porter. (1996). Five Forces Model of Industry Competition

Porter. (1998). Competitor Analysis

Sorlavit Phinlattananon. (2012). Competitive advantage and entrepreneurial skills for the success of Thailand's tourism business market, the Royal University of Technology in Isan (Thailand).

Thamlong Ansuratthakomon. (2015). Factors affecting the creation of competitive advantage of Thai oil and gas companies, Wongwat Ubon Ratsthani. of Bangkok University.

Thomson & Team. (2007). meaning that strategy refers to the executive's action plan used as a guide to the operation of the organization.

Thatsaphone Pilasouk. (2021). studied the customer satisfaction for the service provided by HungArLuoun express delivery company, branch in Luang Prabang province

Wheelen & Hunger. (2012). the five forces model of competition in the industry

Wanvirin ChangPhloy and Virot Jedphalak. (2016). studied international strategies to create competitive advantage in coffee shop business of retail operators in Chanthaburi district.

Zimmerer and Scarborough. (1996). Entrepreneurial Characteristics